# ບົດທີ 15

# ພະກາຍຂອງພະເຢຊູ




**1** ຄຣິດສະຕະຈັກໃນສະໄໝອັກຄະສາວົກ ມີບັນຫາເກີດຂຶ້ນຈາກຂ້າງນອກແລະຈາກຂ້າງໃນດ້ວຍ. ການຂົ່ມເຫັງມາຈາກຂ້າງນອກແຕ່ບັນຫາເລື່ອງອານາເນຍກັບຊະຟີລາເກີດມາຈາກຂ້າງໃດ?

____________________________________________________________

**2** ໃນບົດຮຽນນີ້ ເຮົາຈະຮຽນເລື່ອງບັນຫາອີກປະການໜຶ່ງທີ່ເກີດຈາກຂ້າງໃນຄຣິດສະຕະຈັກ. ໃຫ້ອ່ານ ກຈກ 6:1

ກ. ຈຳນວນລູກສິດເປັນຢ່າງໃດໃນເມື່ອນັ້ນ? ______________________________

ຂ. ຄຣິດສະຕະຈັກແຈກຫຍັງທຸກວັນ? __________________________________

ຄ .ມີບັນຫາຫຍັງເກີດມາ? ________________________________________

__________________________________________________________

**3** ບັນຫານີ້ຄືບັນຫາສັນຊາດ

ກ. ຝ່າຍພວກໃດຈົ່ມ? ____________________________________________

ຂ. ຈົ່ມຕໍ່ພວກໃດ? ______________________________________________

*ທີ່ຈິງທັງສອງຝ່າຍເປັນຄົນຢິວ ແມ່ນແຕ່ຈຳພວກໜຶ່ງເປັນຊາດຢິວທີ່ເຄີຍໄປຢູ່ຕ່າງປະເທດແລ້ວເຂົາຢູ່ໃນຕ່າງປະເທດ ຫຼາຍຊົ່ວອາຍຸຈົນກວ່າລູກຫຼານບໍ່ຮູ້ປາກພາສາເດີມ ຮູ້ແຕ່ປາກພາສາກະລີກ. ຈຳພວກນີ້ຫຼາຍຄົນກັບມາຢູ່ໃນ ກຸງເຢລູຊາເລັມ ບາງຄົນມາຮັບເຊື່ອໃນພະເຢຊູຕັ້ງແຕ່ວັນເພັນເຕຄໍສະເຕ. ດັ່ງນັ້ນຊາດຢິວທີ່ເປັນຄຣິດສະຕຽນໃນກຸງເຢລູຊາເລັມແບ່ງເປັນຈຳພວກທີ່ປາກພາສາກະລີກ ແລະອີກຈຳພວກໜຶ່ງທີ່ປາກພາສາທ້ອງຖິ່ນເຂົາ.*

**4** ຄົນຢິວໃນຄຣິດສະຕະຈັກກຸງເຢລູຊາເລັມ ແບ່ງເປັນສອງສ່ວນໃດ? (ເລືອກ)

ກ. ______ ແບ່ງເປັນສອງຊາດ

ຂ. ______ ເປັນຊາດດຽວແຕ່ແບ່ງເປັນສອງພາສາ

ຄ. ______ ເປັນສອງຊາດແຕ່ພາສາດຽວ

**5** ສ່ວນຊາດຢິວທີ່ປາກພາສາກະລີກ ແລະຈຳພວກທີ່ປາກພາສາທ້ອງຖິ່ນ

ກ. ພວກໃດພົນລະເມືອງປາແລັດສະຕິນ? ______________________________

ຂ. ພວກໃດເຄີຍຢູ່ຕ່າງປະເທດແລ້ວກັບມາ? ______________________________

**6** ກ. ທັງສອງພວກນັ້ນເປັນຊາດໃດ? ______________________________

ຂ. ຄົນທີ່ປາກພາສາກະລີກ ມາແຕ່ໃສ? ______________________________

ຄ. ຄົນທີ່ປາກພາສາເດີມ ເກີດໃນປະເທດໃດ? ______________________________

**7** ໃຫ້ອ່ານ ກຈກ 6:1 ຝ່າຍພວກທີ່ປາກພາສາກະລີກຈົ່ມຢ່າງໃດ? ____________________

______________________________________________________________

**8** ມີຢູ່ບາງເທື່ອທີ່ພວກຄຣິດສະຕຽນບໍ່ເຂົ້າໃຈກັນ. ໃນເຫດການນີ້ເຫັນວ່າຄຣິດສະຕຽນເກີດມີການບໍ່ເຂົ້າໃຈກັນຍ້ອນສາເຫດ ສອງປະການໃດ? (ເລືອກ)

ກ. _______ ກ່ຽວກັບວັດຖຸສິ່ງຂອງ ຂ. _______ ເລື່ອງສິນມະຫາສະໜິດ

ຄ. _______ ເລື່ອງແຕ່ລະພາສາ ງ. _______ ການຖ່ອມຕົວ

**9** ໃຫ້ອ່ານກິດຈະການ 4:32-35

ກ. ບຸກຄົນໃດມີໄຮ່ນາຫຼືຢ້າວເຮືອນກໍໄດ້ເຮັດຫຍັງ? (ຂໍ້ 34) ____________________

ຂ. ເງິນຄ່າຂອງທີ່ຂາຍນັ້ນ ເອົາໄປເຮັດຫຍັງ? (ຂໍ້ 34-35) ____________________

ຄ. ມີການແຈກໃຫ້ໃຜ? ____________________



**10** ພວກໃດຮັບເງິນແລະແຈກໄປຢ່າງນັ້ນ? _______

______________________________

**11** ໃຫ້ອ່ານ ກຈກ 6:2 ແລະ 4

ກ. ໃນຂໍ້ 2 ນັ້ນເຫັນວ່າພວກສາວົກເຄີຍຮັບພາລະສອງຢ່າງຄື ເຂົາປະກາດພະທຳແລະຫຍັງອີກ? ______________________________

ຂ. ໃນຂໍ້ 4 ເຫັນວ່າພວກສາວົກຈະເອົາໃຈໃສ່ໃນການໃດ?

______________________ ແລະ ______________________

**12** ບັນຫາແຕ່ພວກສາວົກຮັບພາລະສອງຢ່າງຄື:

- ການຮັກສາແລະແຈກສິ່ງຂອງ
- ການອ້ອນວອນແລະປະກາດພະທຳ

ທີ່ຈິງພວກສາວົກຄວນເຮັດຫຍັງກ່ອນ? ______________________________

**13** ຕາມທີ່ເຮົາຮຽນມາກ່ອນ ພວກຄຼິດສະຕຽນຮັບພາລະສະແດງຄວາມຮັກຂອງພະອົງຢ່າງໃດ? (ເລືອກ ຂໍ້ດຽວ)

ກ. ______ ໂດຍການຊ່ວຍຄົນທຸກຍາກທົ່ວໄປ

ຂ. ______ ໂດຍການຊ່ວຍແຕ່ສະເພາະພວກຄຼິດສະຕຽນເຮົາ

ຄ. ______ ໂດຍການອ້ອນວອນແລະປະກາດພະທຳຢ່າງດຽວ

**14** ແຕ່ສ່ວນພວກສາວົກນັ້ນທີ່ປຽບກັບຜູ້ນຳໃນຄຼິດສະຕະຈັກ ເຂົາຄວນຮັບພາລະໃນປະການໃດເປັນຕົ້ນ? ______________________ ແລະ ______________________

**15** ໃນ ກຈກ 6:3 ເຂົາເຮັດຢ່າງໃດຈິ່ງຈະແກ້ບັນຫານັ້ນໄດ້? ______________________

______________________________________________________________

**16** ໃຫ້ທ່ານເປີດພະຄຳພີໃນ ກຈກ 6:3-5 ແລ້ວຕອບຄຳຖາມຕໍ່ໄປນີ້:

ກ. ເຂົາຕັ້ງຈັກຄົນໄວ້ເພື່ອງານນັ້ນ? ______________________________

ຂ. ໃນລາຍຊື່ 7 ຄົນນັ້ນເຫັນແຕ່ຊື່ຕາມພາສາກະລິກ. ການນັ້ນສະແດງວ່າເຂົາເປັນພົນລະເມືອງປາແລັດສະຕິນ ຫຼື ຄົນມາຈາກຕ່າງປະເທດ? ______________________

ຄ. ເຫັນວ່າມີຊື່ຄົນໜຶ່ງທີ່ບໍ່ເປັນຊາດຢິວເລີຍ ແຕ່ເປັນໄທເມືອງອັນຕີໂອເຂຍ ທີ່ເຂົ້າຝ່າຍສາດສະໜາຢິວກ່ອນ. ຄົນນັ້ນຊື່ຫຍັງ? ______________________________

ງ. ທີ່ເຂົາເລືອກເອົາຄົນຕ່າງປະເທດນັ້ນສະແດງວ່າຢ່າງໃດ? (ເລືອກ)

______ ເຂົາບໍ່ເລືອກອາຍຸ ______ ເຂົາບໍ່ເລືອກເອົາຄົນງາມ ______ ເຂົາບໍ່ເລືອກໜ້າ

**17** ເຖິງວ່າຄຼິດສະຕະຈັກຈັດ 7 ຄົນນັ້ນໄວ້ເພື່ອການບົວລະບັດດ້ານຮັກສາສິ່ງຂອງກໍຕາມ ແຕ່ໃນພວກ 7 ຄົນນັ້ນມີສອງຄົນ ທີ່ມີອິດທິພົນໃນດ້ານການປ່າວປະກາດດ້ວຍ. ສອງຄົນນັ້ນຄືສອງຄົນທຳອິດໃນລາຍຊື່ ທັງສອງຄົນນັ້ນຊື່ຫຍັງ?________________ ແລະ __________

**18** ໃນສອງຄົນນັ້ນ

ກ. ຄົນໃດເປັນຄົນທຳອິດທີ່ເປັນພະຍານເຖິງຕາຍ? ______________________

ຂ. ຄົນໃດໄປປະກາດພະທຳໃນແຂວງຊາມາເລຍ? (ກຈກ 8:5) ______________

**19** ກ. ທັງສອງຄົນນັ້ນ ເລີ້ມຕົ້ນໂດຍບົວລະບັດດ້ານຫຍັງ? ______________________

ຂ. ຕໍ່ໄປເຂົາປະກາດຫຍັງ? ______________________________________

**20** ເລື່ອງສອງຝ່າຍທີ່ບໍ່ເຫັນພ້ອມໃນ ກຈກ ບົດທີ 6

ກ. ພວກໃດມາຈາກຕ່າງປະເທດທີ່ເຂົ້າກຸງເຢລູຊາເລັມ? ______________________

ຂ. ພວກທີ່ປາກພາສາທ້ອງຖິ່ນ ເປັນພົນລະເມືອງໃດ? ____________________

ຄ. ທີ່ຈິງທັງສອງຝ່າຍເປັນຊາດດຽວກັນຄືຊາດໃດ? ____________________

ງ. ຄຶດສະຕະຈັກເລືອກເອົາຈັກຄົນເພື່ອບົວລະບັດສິ່ງຂອງ? ____________________

ຈ. ສອງຄົນໃດປະກາດພະທຳຕໍ່ໄປ? ____________________

**21** 7 ຄົນນັ້ນຮັບພາລະຢ່າງໃດ? ____________________

**22** ໃຫ້ອ່ານ ກຈກ 6:3

ກ. ຈະເອົາແຕ່ຄົນຢ່າງໃດ? ____________________

ຂ. ຈະເອົາຄົນທີ່ເຕັມໄປດ້ວຍຫຍັງ? ______________ ແລະ ______________

**23** ກ. ສ່ວນຄົນທີ່ຈະດູແລການງານໃນຄຶດສະຕະຈັກ ຄວນຈະເອົາແຕ່ຄົນທີ່ຕິດຕາມພະເຈົ້າຢ່າງພາກພຽນບໍ່? ____________________

ຂ. ເປັນຫຍັງຈຶ່ງມີເງື່ອນໄຂຢ່າງນັ້ນ? ____________________

____________________

**24** ພວກສາວົກຮັບພາລະໃດເປັນຕົ້ນ? ____________________

**25** ໃຫ້ອ່ານມັດທາຍ 20:26-28

ກ. ການຮັບໃຊ້ເປັນເລື່ອງຕ່ຳຕ້ອຍບໍ່? ____________________

ຂ. ເປັນຫຍັງພວກສາວົກເລີກບໍ່ດູແລສິ່ງຂອງ? ____________________

ຄ. ເຂົາເຮັດຢ່າງໃດຈຶ່ງຈະບໍ່ມີວຽກຫຼາຍໂພດ? ____________________

**26** ພວກຜູ້ນຳໃນຄຶດສະຕະຈັກມີບັນຫາຢ່າງດຽວກັນກັບພວກສາວົກ.

ກ. ເຂົາອາດຈະແກ້ບັນຫານັ້ນຢ່າງໃດ? ____________________

ຂ. ຈະເອົາຄົນທີ່ມີເງື່ອນໄຂຢ່າງໃດ? ____________________

**27** ໃຫ້ອ່ານ ອຟຊ 4:11-12

ກ. ມີລາຍຊື່ຂອງພະລາຊະທານໃດແດ່? (ໃຫ້ຈົດທັງ 5 ປະການ) __________

__________ __________ __________ __________



ຂ. ເພື່ອຫຍັງ? (ຂໍ້ 12) ____________________

____________________

**28** ຄຳວ່າ “ໄພ່ພົນຂອງພະອົງ” ນັ້ນໝາຍເຖິງໃຜ? (ເລືອກ)

ກ. ______ ຜູ້ທີ່ໄວ້ວາງໃຈໃນພະເຢຊູທຸກຄົນ

ຂ. ______ ເອົາແຕ່ຄົນທີ່ບໍ່ເຮັດບາບຈັກເທື່ອ

ຄ. ______ ແຕ່ສະເພາະພວກອັກຄະສາວົກຜູ້ປະກາດພະທຳຜູ້ປະກາດຂ່າວປະເສີດ ສິດຍາພິບານແລະອາຈານ.

**29** ຄຳວ່າ "ໄພ່ພົນຂອງພະເຈົ້າ" ນັ້ນ ກ່າວເຖິງຄຣິດສະຕຽນທີ່ແທ້ຈິງທຸກຄົນ. ພວກຜູ້ນຳໃນຄຣິດສະຕະຈັກ ຮັບພາລະທີ່ຈະຕຽມເຮົາໄວ້ໃຫ້ເປັນຜູ້ຮັບໃຊ້ທີ່ເໝາະສົມເພື່ອຫຍັງ? (ອຟຊ 4:12)

____________________________________________________________

**30** ກ. ຈະເອົາຄົນຢ່າງໃດມາເປັນຜູ້ນຳໃນຄຣິດສະຕະຈັກ? __________________________

____________________________________________________________

ຂ. ຕາມໃນ ອຟຊ 4:11-12 ນັ້ນ ຄວນຕຽມໄພ່ພົນ ________ ຂອງພະອົງໃຫ້ເປັນຜູ້ຮັບໃຊ້.

ຄ. ເຫັນວ່າເປັນພາລະຂອງຜູ້ນຳໃນຄຣິດສະຕະຈັກທີ່ຈະຕຽມຄຣິດສະຕຽນທຸກຄົນໃຫ້ເປັນຜູ້ຮັບໃຊ້ຢ່າງໃດ? ____________________________________________

**31** ໃນເອເຟໂຊບົດໃດທີ່ໂປໂລກ່າວວ່າ ຜູ້ນຳໃນຄຣິດສະຕະຈັກຄວນຕຽມພວກຄຣິດສະຕຽນເຫຼົ່ານັ້ນໃຫ້ເປັນຜູ້ຮັບໃຊ້ທີ່ເໝາະສົມ? ____________________________________

**32** ໃນກິດຈະການ ບົດທີ 6 ພວກສາວົກເຮັດຫຍັງຈຶ່ງຈະໃຫ້ຄົນອື່ນໃນຄຣິດສະຕະຈັກມີພາລະດ້ວຍ? __________________________________________________

**33** ກ. ເຂົາເລືອກຄົນທີ່ມີລັກສະນະຢ່າງໃດໃຫ້ເປັນຜູ້ດູແລນັ້ນ? ______________________

____________________________________________________________

ຂ. ບໍ່ແມ່ນແຕ່ພວກເຖົ້າແກ່ແລະສິດຍາພິບານທີ່ຈະບົວລະບັດການໃນຄຣິດສະຕະຈັກ. ພະເຈົ້າຈັດພາລະຂອງຜູ້ນຳນັ້ນໄວ້ໃຫ້ຕຽມຄຣິດສະຕຽນທຸກຄົນໃນການຮັບໃຊ້. ຕາມທີ່ເຮົາຮຽນມາຈາກພະທຳເອເຟໂຊ ມີສ່ວນໃດໃນຄຣິດສະ ຕະຈັກທີ່ ຄວນຮັບໃຊ້? ______________

**34** ໃນ 1 ໂກລິນໂທ 12:20 ແລະ 27 ອາຈານໂປໂລຍົກຫຍັງມາເປັນສັນຍາລັກທີ່ປຽບເຖິງພວກຄຣິດສະຕຽນ? ________________________________________________

**35** ໃຜມີສ່ວນໃນພະກາຍນັ້ນ? ________________________________________

**36** ໃຫ້ອ່ານ 1 ໂກລິນໂທ 12:14-27 ຕອນພະຄຳພີນັ້ນສອນວ່າຢ່າງໃດ? (ໃຫ້ໝາຍເອົາຂໍ້ທີ່ຖືກ)

ກ. _____ ອະໄວຍະວະທຸກອັນ ມີສ່ວນໃນຮ່າງກາຍ

ຂ. _____ ອະໄວຍະວະທຸກອັນ ມີພາລະເພື່ອບົວລະບັດອະໄວຍະວະອື່ນ ໆ

ຄ. _____ ອະໄວຍະວະບາງຢ່າງບໍ່ມີລາຄາເລີຍ

**37** ຕາມໃນ 1 ໂກລິນໂທບົດທີ 12. (ຕື່ມຄວາມທີ່ຂາດ)

ກ. ຄຣິດສະຕຽນທຸກຄົນມີ _________ ໃນຄຣິດສະຕະຈັກ.

ຂ. ຄຣິດສະຕຽນທຸກຄົນມີ _________ ເພື່ອບົວລະບັດຄຣິດສະຕຽນຄົນອື່ນ ໆ

**38** ມີຄຣິດສະຕຽນບາງຄົນທີ່ຖືວ່າຕົນເອງບໍ່ມີຜົນປະໂຫຍດໃນຄຣິດສະຕະຈັກ. ຖ້າເຫັນຄົນຢ່າງນັ້ນທ່ານຈະຍົກຂໍ້ພະຄຳພີໃດ ເພື່ອອົບຮົມເຂົາ? (ເລືອກ)

ກ. _____ 1 ໂກລິນໂທ 12:15-16

ຂ. ______ 1 ໂກລິນໂທ 12:21-22

ຄ. ______ 2 ໂກລິນໂທ 12:2

**39** ໃຫ້ທ່ານໝາຍ √ ຂ້າງສິ່ງທີ່ສົມຄວນຫຼີກເວັ້ນໃນຄຼິດສະຕະຈັກ.

ກ. ______ ຄວາມອິດສາຢາກໄດ້ຕຳແໜ່ງ

ຂ. ______ ຂອບໃຈພະເຈົ້າທີ່ຜູ້ອື່ນມີພອນສະຫວັນ

ຄ. ______ ການດູຖູກຕົນເອງວ່າ ບໍ່ມີຄຸນປະໂຫຍດ

ງ. ______ ການນັບຖືເຊິ່ງກັນແລະກັນ

ຈ. ______ ການດູຖູກຜູ້ອື່ນທີ່ບໍ່ມີພອນສະຫວັນ

**40** 1 ໂກລິນໂທ ບົດທີ 12 ສອນເຮົາວ່າຢ່າງໃດ? (ຕື່ມຄວາມທີ່ຂາດ)

ກ. ຄຼິດສະຕຽນທຸກຄົນມີສ່ວນໃນ ________________________________________

ຂ. ຄຼິດສະຕຽນທຸກຄົນມີພາລະເພື່ອ ______________________ ຄຼິດສະຕຽນຄົນອື່ນ ໆ.

**41** ຂໍ້ໃດແດ່ໃນ 1 ໂກລິນໂທ ບົດທີ 12 ຄຼິດສະຕຽນທຸກຄົນມີໜ້າທີ່ໃນພະກາຍຂອງພະອົງ. ເຖິງໜ້າທີ່ນັ້ນຈະມີອັນ ແຕກຕ່າງກັນໄປຄົນລະຢ່າງ? (ເລືອກ)

______ ຂໍ້ 17 ______ ຂໍ້ 19 ______ ຂໍ້ 3

**42** ໃຫ້ທ່ານອ່ານ 1 ໂກລິນໂທ 12:28 ແລ້ວຂຽນລາຍຊື່ໜ້າທີ່ຕ່າງ ໆ. __________________

______________________________________________________________

______________________________________________________________

**43** ກ. ໃນ 1 ໂກລິນໂທ ບົດທີ 12 ອາຈານໂປໂລຍົກສັນຍາລັກໃດມາບັນລະຍາຍເລື່ອງຄຼິດສະຕະຈັກ? ______________________________________________________

ຂ. ເພິ່ນສອນວ່າຄຼິດສະຕຽນທຸກຄົນເປັນຢ່າງໃດໃນຄຼິດສະຕະຈັກ? (2 ປະການ)

______________________________________________________________

______________________________________________________________

ໃຫ້ທ່ານພິຈາລະນາເລື່ອງຕໍ່ໄປນີ້ກ່ອນປະຊຸມຂ້າງໜ້າ:

1. ສິດຍາພິບານຫຼືເຖົ້າແກ່ຄວນຮັບພາລະໃດໃນຄຼິດສະຕະຈັກ?
2. ຖ້າຜູ້ນຳໃນຄຼິດສະຕະຈັກມີວຽກຫຼາຍໂພດ ຈະແກ້ໄຂຢ່າງໃດ?
3. ສ່ວນຄຼິດສະຕຽນທີ່ບໍ່ຢາກຮັບໜ້າທີ່ໃນຄຼິດສະຕະຈັກ ຈະເຮັດຢ່າງ ໃດໃຫ້ເຂົາພ້ອມທີ່ຈະລົງມືຊ່ວຍ?
4. ຈະເຮັດຢ່າງໃດເພື່ອໃຫ້ຄຼິດສະຕະຈັກຈະເລີນກ້າວໜ້າໃນດ້ານຕໍ່ໄປນີ້:

    ການປ່າວປະກາດ

    ການຊ່ວຍຄົນຍາກຈົນ

    ການອົບຮົມຄຼິດສະຕຽນໃໝ່ ໆລໆ

**ຄຳຕອບ:**

**1** *ຂ້າງໃນ*

**2** *ກ. ທະວີຂຶ້ນຫຼາຍ ຂ. ແຈກທານ*
*ຄ. ມີຄົນມາຕິວ່າ ພວກແມ່ ມ້າຍທີ່ປາກພາສາກະລີກ ຮັບທານບໍ່ທໍ່ກັບ ແມ່ມ້າຍທີ່ເປັນພົນລະເມືອງປາແລັດສະຕິນ.*

**3** *ກ. ຝ່າຍພວກທີ່ປາກພາສາກະລີກ ຂ. ພວກພົນລະເມືອງປາແລັດສະຕິນ*

**4** *ຂ ຖືກ*

**5** *ກ. ຜູ້ທີ່ປາກພາສາທ້ອງຖິ່ນ ຂ. ຜູ້ທີ່ປາກພາສາກະລີກ*

**6** *ກ. ຊາດຢິວ ຂ. ຕ່າງປະເທດ ຄ. ປາແລັດສະຕິນ*

**7** *ເຂົາເວັ້ນບໍ່ໄດ້ແຈກໃຫ້ພວກແມ່ ມ້າຍກະລີກ*

**8** *ກ ຄ ຖືກ*

**9** *ກ. ຂາຍ ຂ. ມອບໄວ້ໃນມືຂອງພວກອັກຄະສາວົກ ຄ. ທຸກຄົນຕາມທີ່ຕ້ອງການ*

**10** *ພວກສາວົກ*

**11** *ກ. ຮັບໃຊ້ການກິນການດື່ມ ຂ. ອ້ອນວອນ ແລະ ປະກາດພະທຳ*

**12** *ອ້ອນວອນ ແລະ ປະກາດພະທຳ*

**13** *ກ ຖືກ*

**14** *ອ້ອນວອນ ແລະ ປະກາດພະທຳ*

**15** *ເຂົາຕັ້ງເຈັດຄົນທີ່ມີຊື່ສຽງດີທີ່ເຕັມໄປດ້ວຍ ພະວິນຍານບໍລິສຸດແລະສະຕິປັນຍາ ໃຫ້ດູແລ ການນັ້ນ. (ຄຳຄ້າຍຄືກັນກໍໄດ້)*

**16** *ກ. 7 ຄົນ ຂ. ຕ່າງປະເທດ ຄ. ນີໂກລາໂອ ງ. ເຂົາບໍ່ເລືອກໜ້າ*

**17** *ຊະເຕຟາໂນແລະຟີລິບ*

**18** *ກ. ຊະເຕຟາໂນ ຂ. ຟີລິບ*

**19** *ກ. ສິ່ງຂອງ ຂ. ພະທຳ*

**20** *ກ. ຜູ້ທີ່ປາກພາສາກະລີກ ຂ. ປາແລັດສະຕິນ ຄ. ຢິວ ງ. 7 ຄົນ*
*ຈ. ຊະເຕຟາໂນແລະຟີລິບ*

**21** *ບົວລະບັດຮັກສາດ້ານສິ່ງຂອງ*

**22** *ກ. ທີ່ມີຊື່ສຽງດີ ຂ. ພະວິນຍານບໍລິສຸດ ແລະ ສະຕິປັນຍາ*

**23** *ກ. ຄວນ ຂ. (ໃຫ້ປຶກສາຫາລືກັນໃນປະຊຸມ)*

**24** *ອ້ອນວອນ ແລະ ປະກາດພະທຳ*

**25** *ກ. ບໍ່ ຂ. ເຂົາຢາກອ້ອນວອນແລະປະກາດພະທຳ*
*ຄ. ຕັ້ງຄົນມາຮັບໃຊ້ການກິນການດື່ມ*

**26** *ກ. ມອບພາລະນັ້ນໄວ້ໃຫ້ຜູ້ອື່ນ*
*ຂ. ຄົນມີຊື່ສຽງດີ ທີ່ເຕັມໄປດ້ວຍພະວິນຍານບໍລິສຸດແລະສະຕິປັນຍາ*

## ຄຳຕອບ (ຕໍ່):

**27** *ກ. ອັກຄະສາວົກ ຜູ້ປະກາດພະທຳ ຜູ້ປະກາດຂ່າວປະເສີດ ສິດຍາພິບານ ແລະອາຈານ*
*ຂ. ເພື່ອຈັດຕຽມໄພ່ພົນທັງຫຼາຍຂອງພະອົງໃຫ້ເປັນຜູ້ຮັບໃຊ້ທີ່ເໝາະສົມ*

**28** *ກ ຖືກ*

**29** *ເພື່ອເສີມສ້າງພະກາຍຂອງພະຄຼິດໃຫ້ຈະເລີນຂຶ້ນ*

**30** *ກ. ຄົນທີ່ມີຊື່ສຽງດີ ທີ່ເຕັມໄປດ້ວຍພະວິນຍານບໍລິສຸດແລະສະຕິປັນຍາ*
*ຂ. ທັງຫຼາຍ ຄ. ທີ່ເໝາະສົມ*

**31** *ເອເຟໂຊ ບົດ 4*

**32** *ຈັດຕັ້ງ 7 ຄົນເປັນຜູ້ດູແລດ້ານສິ່ງຂອງ*

**33** *ກ. ຄົນທີ່ມີຊື່ສຽງດີ ທີ່ເຕັມໄປດ້ວຍພະວິນຍານບໍລິສຸດແລະສະຕິປັນຍາ ຂ. ທຸກຄົນ*

**34** *ພະກາຍ*

**35** *ຄຼິດສະຕຽນແທ້ທຸກຄົນ*

**36** *ກ ຂ ຖືກ*

**37** *ກ. ສ່ວນ ຂ. ພາລະ*

**38** *ກ ຂ ຖືກ*

**39** *ກ ຄ ຈ ຖືກ*

**40** *ກ. ຄຼິດສະຕະຈັກ ຂ. ບົວລະບັດ*

**41** *ຂໍ້ 17 ແລະ ຂໍ້ 19*

**42** *ອັກຄະສາວົກ, ຜູ້ປະກາດພະທຳ, ຄູບາອາຈານ, ຜູ້ເຮັດການອິດທິລິດ,*
*ຜູ້ມີອຳນາດໃຫ້ດີພະຍາດ, ຜູ້ອຸປະຖຳ, ຜູ້ປົກຄອງ ແລະ ຜູ້ປາກພາສາແປກ ໆ.*

**43** *ກ. ຮ່າງກາຍ*
*ຂ. ຄຼິດສະຕຽນທຸກຄົນ ມີສ່ວນໃນຄຼິດສະຕະຈັກ ຄຼິດສະຕຽນທຸກຄົນ ມີພາລະເພື່ອບົວລະບັດ*
*ຄຼິດສະຕຽນຄົນອື່ນ ໆ*





